# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 27 ສິງຫາ 2017 (8-27-2017)

# ທີ່ນີ້, ດຽວນີ້

ເພື່ອນບ້ານຄົນໃດ ທີ່ທ່ານດີໃຈທີ່ໄດ້ມີໂອກາດໄດ້ຮູ້ຈັກ?

**ຈຸດສຳຄັນໃນບົດຮຽນ**: *ທ່ານບໍ່ຈຳເປັນຕ້ອງເດີນທາງໄກເພື່ອແບ່ງປັນຊີວິດທີ່ຖືກປ່ຽນແປງຂອງທ່ານໃນພຣະຄຣິດ.*

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ບາງທີຄົນເຮົາອາດສາມາດຈັດເຂົ້າໃນນຶ່ງຂອງສອງກຸ່ມນີ້: ຜູ້ທີ່ມັກອອກເດີນທາງຫຼືຜູ້ທີ່ມັກຢູ່ໃກ້ບ້ານເຮືອນ. ຜູ້ທີ່ມັກອອກເດີນທາງກໍເພີດເພີນກັບປະສົບການອັນໃໝ່ໆ ຈຸດສົນໃຈທີ່ແຕກຕ່າງ, ອາຫານທີ່ແຕກຕ່າງ, ແລະວິທີການກະທຳທີ່ແຕກຕ່າງ. ພວກເຫຼົ່ານັ້ນທີ່ມັກຢູ່ໃກ້ບ້ານເຮືອນກໍເຮັດໄດ້ ແຕ່ບໍ່ແມ່ນເຂົາເຈົ້າບໍ່ຢາກລອງບາງຢ່າງໃໝ່ໆ, ຫາກແຕ່ວ່າເຂົາເຈົ້າມີຄວາມສຸກຫຼາຍກັບສິ່ງທີ່ໄດ້ລຶ້ງເຄີຍນີ້ແລ້ວ.

ບໍ່ວ່າທາງໃດກໍຕາມ, ພວກມັກເດີນທາງແລະພວກບໍ່ມັກເດີນທາງກໍຄົ້ນພົບຢ່າງນຶ່ງເໝືອນກັນທັງນັ້ນ ຄົນທີ່ໜ້າສົນໃຈຢູ່ອ້ອມຮອບຕົວເຮົາບໍ່ວ່າຈະທ່ອງທ່ຽວທົ່ວໂລກຫຼືຢູ່ຟາກທາງ. ແມ່ນແຕ່ຢູ່ໃນຄຸ້ມເຂດພວກເຮົາເອງ, ພວກເຮົາພົບກັບຄົນຕ່າງເຊື້ອຊາດ, ຕ່າງເບື້ອງຫຼັງ, ແລະຕ່າງປະເພນີ. ພວກເຮົາຍັງພົບກັບຄົນ "ທີ່ຄືກັບເຮົາ" ເຊັ່ນກັນໃນຕອນທີແລກ, ແຕ່ໃນຂນະທີ່ໄດ້ຮູ້ຈັກກັບເຂົາເຈົ້າ, ພວກເຮົາໄດ້ພົບວ່າເຂົາເຈົ້າມີຄວາມແຕກຕ່າງໃນບຸກຄະລິກແລະໜ້າສົນໃຈ. ຄົນເຫຼົ່ານີ້ມີສິ່ງນຶ່ງທີ່ຄ້າຍຄືກັນ ນັ້ນກໍຄືເຂົາເຈົ້າຕ້ອງການພຣະເຢຊູ.

ພຣະເຢຊູໄດ້ເອີ້ນຊາຍຄົນນຶ່ງໃຫ້ໄປເຮັດວຽກປະກາດຂ່າວປະເສີດໃນເຂດຄຸ້ມຂອງລາວເອງ ຫລັງຈາກຊາຍຄົນນີ້ໄດ້ພົບກັບພຣະເຢຊູ, ພວກເຮົາເຫັນວ່າພວກເຮົາບໍ່ຕ້ອງໄປໄກເພື່ອຈະປ່ຽນໂລກນີ້.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ມາຣະໂກ 5:1-2</u>**

*1. ຝ່າຍພຣະອົງກັບພວກສິດໄດ້ຂ້າມທະເລໄປເຖິງເຂດແດນຊາວເຄຣະຊາຄົນ. 2. ພໍພຣະອົງສະເດັດຂຶ້ນຈາກເຮືອ ກໍມີຄົນນຶ່ງທີ່ມີຜີຖ່ອຍຮ້າຍສິງຢູ່ໄດ້ອອກຈາກປ່າຊ້າມາພົບພຣະອົງ*

ປໂຍກນີ້ຄົງບໍ່ແປກສຳລັບທ່ານ: ພວກເຮົາຢູ່ໃນໂລກທີ່ແຕກ**ສລາຍ.** ລາຍງານຂ່າວກໍບອກວ່າມີການຈອບຍິງຊຸມນຸມຊົນກຸ່ມໃຫຍ່ແລະວາງລະເບີດຢູ່ຕລອດ. ການຄ້າຂາຍມະນຸດແມ່ນບັນຫາໃຫຍ່ຂອງໂລກ, ແມ້ກະທັ້ງໃນຫຼັງບ້ານຂອງພວກເຮົາເອງ, ການແບ່ງແຍກຜິວພັນກໍຮຸນແຮງ, ບໍ່ວ່າທ່ານຈະຕົກຢູ່ໃນກຸ່ມຜິວໃດກໍຕາມ.

**ເຮົາ**ເຫັນຄວາມແຕກ**ສລາຍ**ທີ່ອ້ອມຮອບຕົວເຮົານີ້ໄດ້ງ່າຍໆ. **ຊຶ່ງ**ກໍງ່າຍທີ່ຈະເວົ້າກ່ຽວກັບບັນຫາຕ່າງໆເຫຼົ່ານີ້ "ຂ້າງນອກນັ້ນ." ແຕ່ວ່າຢ່າໃຫ້ພວກເຮົາລືມໄປວ່າໂລກຂອງພວກເຮົານີ້**ໄດ້**ແຕກ**ສລາຍ** ເພາະວ່າພວກເຮົາເປັນຄົນ

**ທີ່**ແຕກ**ສລາຍ** "ໃນທີ່ນີ້."

ໃນພຣະ**ທັມ**ມາຣະໂກ 5, ພວກເຮົາໄດ້ພົບກັບຊາຍຜູ້ນຶ່ງທີ່ລາວຮູ້ຈັກວ່າລາວແຕກ**ສລາຍ.** ພຣະເຢຊູແລະພວກສາວົກຂອງພຣະອົງໄດ້ເດີນທາງຂ້າມທະເລຄາລີເລໄປຍັງຂົງເຂດທີ່ຄົນສ່ວນໃຫຍ່ຈະແມ່ນພວກຄົນຕ່າງຊາດ ຂະນະທີ່ພຣະເຢຊູກ້າວຢຽບຝັ່ງ, ຊາຍທີ່ບໍ່ມີຊື່ນີ້ກໍປາກົດອອກມາຜູ້ດຽວ. ລາວໄດ້ຢູ່ຜູ້ດຽວເນື່ອງດ້ວຍເຫດຜົນທີ່ຈຳເປັນ. ກ່າວຄື, **ຊີວິດ**ລາວແຕກ**ສລາຍ**ຝ່າຍຮ່າງກາຍ, ຝ່າຍປະສາດ, ຝ່າຍຈິດໃຈ, ແລະຝ່າຍວິນຍານ. ພວກເຮົາບໍ່ຮູ້ສາເຫດທີ່ລາວຖືກຜີສິງ "ກັບວິນຍານຊົ່ວຮ້າຍ," ແຕ່ວ່າຄວາມເຈັບປວດແລະການລົ້ມລຸກຄຸກຄານຂອງລາວກໍໜ້າສັງເວດ

- ການປະພຶດທີ່ເອົາແນ່ນອນບໍ່ໄດ້ຂອງລາວໄດ້ແຍກລາວອອກຈາກຄຸ້ມເຂດ ແລະຄອບຄົວຂອງລາວທີ່ລາວອາດເຄີຍມີມາແລ້ວແຕ່ກ່ອນ.
- "ການປິ່ນປົວຮັກສາ" ຂອງຄຸ້ມເຂດສຳລັບລາວກໍມີພຽງແຕ່ມັດຕິດໂສ້ໃສ່ກຸນແຈໄວ້ເທົ່ານັ້ນ, ຊຶ່ງເຮັດໃຫ້ລາວແຕກ**ສລາຍ (**ເບິ່ງ ຂໍ້ 4). ພລັງຂອງຜີອັນນີ້ເປັນເຫດໃຫ້ຄົນຢ້ານກົວລາວຫຼາຍຂຶ້ນເທົ່ານັ້ນ, ດັ່ງນັ້ນລາວພຽງແຕ່ໜີຫ່າງແລະປ້ອງກັນຕົວເອງໃນປ່າຊ້າ.
- ລາວໄດ້ປະເປືອຍ, ຊຶ່ງແນ່ນອນທີ່ສຸດທີ່ເປັນເຫດໃຫ້ລາວຕ້ອງເຈັບປວດເພີ້ມຂຶ້ນຈາກການກະທົບກັບສິ່ງແວດລ້ອມຕ່າງໆ **(**ເບິ່ງ ລູກາ **8:27).**

| **ຕາມປົກກະຕິແລ້ວທ່ານເຮັດຢ່າງໃດ ເມື່ອທ່ານປະເຊີນກັບຄວາມແຕກ**ສລາຍ? |
|---|

- ລາວຖືກທໍຣະມານທາງຝ່າຍເນື້ອໜັງຮ່າງກາຍ, ຝ່າຍຈິດໃຈ, ແລະຝ່າຍວິນຍານຈົນລາວຕັ້ງໃຈປາດຕົວເອງ. ອັນນີ້ອາດຈະອອກມາຈາກເສັ້ນເອັນທີ່ພະຍາຍາມອອກຈາກການຄວບຄຸມຂອງຜີມານ ຫຼືພະຍາຍາມຢຸດຄວາມເຈັບປວດຂອງລາວໂດຍການຂ້າຕົວຕາຍ. ຊາຍຄົນນີ້ບໍ່ພຽງແຕ່ເປັນບ້າເສັຽສະຕິເທົ່ານັ້ນ. ລາວຖືກຜີເຂົ້າສິງ.

ມັນເປັນທັມມະຊາດສຳລັບພວກເຮົາທີ່ຢາກຫຼີກເວັ້ນຄົນທີ່ຊີວິດແຕກສລາຍ. ແຕ່ວ່າພວກເຮົາຢູ່ຖ້າມກາງພວກຄົນທີ່ແຕກສລາຍແລະເຈັບປວດ. ເຂົາເຈົ້າອາດຈະບໍ່ໄດ້ຖືກຜີຮ້າຍບັງຄັບໃຫ້ເຮັດຄວາມເຈັບປວດຕໍ່ຕົວເຂົາເຈົ້າເອງແລະຄົນອື່ນໆ, ແຕ່ວ່າພວກເຂົາເຈົ້າກໍເຈັບປວດຢູ່ດີ, ຄືກັນກັບພວກເຮົາຕອນກ່ອນພົບກັບພຣະຄຣິດ.

## 2. <u>ມາຣະໂກ 5:8-15</u>

*8. ມັນເວົ້າດັ່ງນັ້ນກໍເພາະພຣະອົງຊົງບອກມັນວ່າ, "ເຈົ້າຜີຖ່ອຍຮ້າຍອອກມາຈາກຄົນນີ້ແມ." 9. ແລ້ວພຣະອົງຊົງຖາມວ່າ, "ມຶງຊື່ຫຍັງ" ມັນຕອບວ່າ, "ຊື່ກອງທັບເພາະພວກເຮົາມີຫຼາຍຕົວນຳກັນ." 10. ມັນຈຶ່ງໜ່ວງໜ່ຽວອ້ອນວອນພຣະອົງບໍ່ໃຫ້ຂັບໄລ່ມັນອອກຈາກເຂດແດນເມືອງນັ້ນ. 11. ມີໝູຝູງໃຫຍ່ກຳລັງຫາກິນຢູ່ຕາມຈ້າຍພູນັ້ນ. 12. ຜີເຫຼົ່ານັ້ນໄດ້ທູນຂໍພຣະອົງວ່າ, "ຂໍໂຜດໃຫ້ພວກເຮົາເຂົ້າສິງຢູ່ໃນໝູຝູງນີ້ທ້ອນ." 13. ພຣະອົງກໍຊົງອະນຸຍາດໃຫ້ ແລ້ວຜີຖ່ອຍຮ້າຍເຫຼົ່ານັ້ນຈຶ່ງອອກໄປເຂົ້າສິງຢູ່ໃນຝູງໝູ ໝູທັງຝູງປະມານສອງພັນໂຕ ກໍຟ້າວແລ່ນລົງຈາກຕາລິ່ງຊັນໂຕນໃສ່ທະເລຈົມນ້ຳຕາຍທັນທີ. 14. ຝ່າຍຄົນລ້ຽງໝູນັ້ນຕ່າງຄົນຕ່າງໜີໄປ ເລົ່າເຣື່ອງທັງໃນເມືອງແລະນອກເມືອງ ແລ້ວຄົນທັງປວງກໍອອກມາເບິ່ງເຫດການທີ່ເກີດຂຶ້ນນັ້ນ. 15. ເມື່ອເຂົາມາເຖິງພຣະເຢຊູກໍເຫັນຄົນທີ່ຜີທັງກອງທັບສິງຢູ່ນັ້ນ ນຸ່ງຫົ່ມເສື້ອຜ້າມີສະຕິອາຣົມດີ ເຂົາຈຶ່ງມີໃຈຢ້ານ.*

ພຣະເຢຊູບໍ່ປາຖນາທີ່ຈະປະຊາຍຄົນນັ້ນຢູ່ໃນສະຖານະການຢ່າງນັ້ນ, ດັ່ງນັ້ນພຣະອົງຈຶ່ງສູ້ໜ້າກັບຕົ້ນເຫດຂອງຄວາມແຕກສລາຍຂອງລາວ. ພຣະອົງສັ່ງໃຫ້ວິນຍານຮ້າຍອອກ, ແລະພຣະອົງສັ່ງໃຫ້ວິນຍານຊົ່ວຮ້າຍໃຫ້ເປີດເຜີຍຕົວມັນເອງ. ທົ່ວທັງພຣະຄັມພີ, ຊື່ຂອງຜູ້ໃດຜູ້ນຶ່ງແມ່ນມີສ່ວນພົວພັນກັບຄຸນສົມບັດຂອງຜູ້ນັ້ນ. ດັ່ງນັ້ນ, ໂດຍການຖາມວ່າ, "ມຶງຊື່ຫຍັງ?," ພຣະເຢຊູກຳລັງໃຫ້ຜີຮ້າຍສາລະພາບທັມມະຊາດຄວາມຊົ່ວຮ້າຍທີ່ມັນໄດ້ບັງຄັບຊາຍຄົນນີ້ໃຫ້ເປັນທາດຮັບໃຊ້ຂອງມານ.

ຜີມານໄດ້ຕອບວ່າ, "ກອງທັບ." ກອງທັບຂອງຄົນໂຣມັນແມ່ນມີທະຫານປະມານ 6,000 ຄົນ. ທະຫານຂອງຜີມານໄດ້ເຂົ້າສິງຊາຍທີ່ຊີວິດແຕກສລາຍຄົນນີ້!

ຜູ້ບັນທຶກພຣະຄັມພີໄດ້ສເນີໃຫ້ເຫັນພາບພົດອັນສະເທືອນໃຈຂອງພວກຜີຮ້າຍທີ່ເຂົ້າໄປໃນໝູ "ປະມານສອງພັນໂຕ" ແລະໝູທັງຝູງກໍຟ້າວ "ແລ່ນລົງຈາກຕາລິ່ງຊັນໂຕນໃສ່ທະເລ" ຈົມນ້ຳຕາຍທັນທີ. ຂນະທີ່ມີຄວາມຫາຍຍະນະເກີດຂຶ້ນກັບໝູເບິ່ງຄືວ່າເປັນການໂຫດຮ້າຍ, ຊຶ່ງເຫັນວ່າສຳຄັນແລະສັງເກດເຫັນວ່າພຣະເຢຊູບໍ່ໄດ້ສັ່ງໃຫ້ຜີຮ້າຍເຂົ້າໄປອາສັຍຢູ່ໃນໝູແລະທຳລາຍພວກໝູ; ພຣະອົງພຽງແຕ່ອະນຸຍາດໃຫ້ຜີມານໄປຢູ່ນຳໝູ.

ມີເຫດຜົນຫຼາຍປະການສຳລັບການກະທຳຂອງພຣະເຢຊູ:

- ໄດ້ສະແດງໃຫ້ເຫັນຢ່າງແຈ່ມແຈ້ງວ່າຜີຮ້າຍຕັ້ງໃຈເຮັດສິ່ງຊົ່ວຮ້າຍ. ພວກມັນເຮັດຕໍ່ຝູງໝູແນວໃດນັ້ນກໍແມ່ນຄວາມຕັ້ງໃຈຂອງພວກມັນທີ່ຈະເຮັດຕໍ່ຊາຍຄົນນັ້ນ.
- ການດັບສູນຂອງພວກໝູໄດ້ສະແດງໃຫ້ເຫັນວ່າຜີມານຮ້າຍໄດ້ອອກຈາກຊາຍຄົນນີ້ຢ່າງເດົາບໍ່ຜິດລາວຫາຍດີເປັນປົກກະຕິແລ້ວ.
- ເປັນພະຍານວ່າພຣະເຢຊູມີອຳນາດໃນການປິ່ນປົວ. ພວກໄທບ້ານກໍຟ້າວແລ່ນອອກມາເບິ່ງເມື່ອເຂົາເຈົ້າໄດ້ຍິນກ່ຽວກັບເຣື່ອງໝູຂອງເຂົາເຈົ້າ. ເຂົາເຈົ້າຄວນຈະງຶດງໍ້ອັສຈັນ, ແຕ່ເຂົາເຈົ້າກັບພາກັນຢ້ານ.

ສິ່ງທີ່ສຳຄັນທີ່ສຸດຂອງເຣື່ອງນີ້ແມ່ນຊາຍຜູ້ມີຊີວິດທີ່ແຕກສລາຍຄົນນັ້ນມີປະສົບການກັບເສລີພາບ ຊີວິດທີ່ຖືກສ້າງຂຶ້ນໃໝ່ໃນພຣະຄຣິດ ແລະພວກເຮົາກໍສາມາດເປັນໄດ້ເຊັ່ນດຽວກັນ.

ບໍ່ວ່າຊີວິດຂອງທ່ານຈະມືດດຳຊ່ຳໃດ, ພຣະເຢຊູສາມາດປ່ຽນແປງທ່ານໂດຍພຣະຄຸນຂອງພຣະອົງ. ບໍ່ວ່າແມ່ນຫຍັງກໍຕາມ ໂຄງຮ່າງກະດູກຕ່າງໆອາດຈະລີ້ຊ່ອນຢູ່ໃນຕົວທ່ານ, ພຣະຄຣິດສາມາດເຍືອງແສງໄຟເຂົ້າໃສ່ເງົາຕ່າງໆແລະປິ່ນປົວທ່ານໄດ້. ບໍ່ວ່າຄວາມສັມພັນຂອງທ່ານກັບຄົນອື່ນຈະແຕກຫັກເຖິງຂນາດໃດກໍຕາມ, ພຣະອົງສາມາດເປີດປະຕູໄປສູ່ມື້ໃໝ່ໄດ້. ພຣະເຢຊູບໍ່ພຽງແຕ່ຢູ່ໃນພັນທະກິດຂອງການໃຫ້ອະພັຍໂທດ ແລະປົວແປງ<u>ອະດີດ</u>ຂອງທ່ານເທົ່ານັ້ນ, ແຕ່ພຣະອົງຍັງຕ້ອງການໄຖ່<u>ປັດຈຸບັນ</u>ຂອງທ່ານ ແລະປ່ຽນແປງ<u>ອະນາຄົດ</u>ຂອງທ່ານເຊັ່ນກັນ.

| ດົນປານໃດແລ້ວ ທີ່ທ່ານໄດ້ສັງເກດເຫັນການປ່ຽນແປງອັນຍິ່ງໃຫຍ່ໃນຊີວິດຂອງຄົນໃດຄົນນຶ່ງ? |
|---|

## 3. <u>ມາຣະໂກ 5:18-20</u>

*18. ເມື່ອພຣະອົງກຳລັງສະເດັດລົງເຮືອ ຄົນທີ່ຜີສິງຢູ່ແຕ່ກ່ອນນັ້ນໄດ້ອ້ອນວອນຂໍຢູ່ກັບພຣະອົງ 19. ພຣະອົງບໍ່ໄດ້ຊົງອະນຸຍາດ ແຕ່ຊົງກ່າວແກ່ເຂົາວ່າ, "ໃຫ້ເຈົ້າເມືອບ້ານຫາຍາດພີ່ນ້ອງ ແລ້ວບອກເຂົາເຖິງເຣື່ອງເຫດການອັນໃຫຍ່ຊຶ່ງພຣະເຈົ້າໄດ້ຊົງໂຜດແກ່ເຈົ້າ ແລະຊົງພຣະເມດຕາແກ່ເຈົ້າແລ້ວ." 20. ຝ່າຍຄົນນັ້ນກໍທູນລາ ແລ້ວຕັ້ງຕົ້ນປະກາດໃນແຂວງເດກາໂປລີ ເຖິງເຫດການທີ່ພຣະເຢຊູໄດ້ຊົງໂຜດແກ່ຕົນ ແລະຄົນທັງປວງກໍງຶດປລາດໃຈຫຼາຍ*

ພຣະເຢຊູໄດ້ສົ່ງພວກທີ່ຕິດຕາມພຣະອົງໄປບ່ອນໃໝ່ເລື້ອຍໆ. ຍົກຕົວຢ່າງ, ຫຼັງຈາກທີ່ພຣະເຢຊູໄດ້ມອບໜ້າທີ່ຮັບຜິດຊອບໃຫ້ແກ່ສາວົກສິບສອງຄົນຂອງພຣະອົງແລ້ວ, ພຣະອົງກໍໄດ້ສົ່ງເຂົາເຈົ້າໄປຕາມແຕ່ລະບ້ານ"ເພື່ອປະກາດເຖິງຣາຊອານາຈັກຂອງພຣະເຈົ້າແລະໃຫ້ປິ່ນປົວຄົນເຈັບປ່ວຍ" (ລູກາ 9:2). ຫຼັງຈາກນັ້ນ, ພຣະເຢຊູໄດ້ສົ່ງລູກສິດ 72 ຄົນໄປບອກຄົນອື່ນໆກ່ຽວກັບຣາຊອານາຈັກຂອງພຣະເຈົ້າ (ເບິ່ງ ລູກາ 10:1-12).

ແຕ່ວ່າບໍ່ແມ່ນຄັ້ງນີ້, ພຣະເຢຊູໄດ້ບອກແກ່ຊາຍຜູ້ທີ່ຖືກຜີສິງໃຫ້ "ເມືອເຮືອນ." ພວກຊາວບ້ານກໍໄດ້ຂໍຮ້ອງໃຫ້ພຣະເຢຊູອອກໜີຈາກເຂດນັ້ນເສັຽ, ແຕ່ວ່າພຣະເຢຊູກໍຍັງເປັນຫ່ວງເປັນໃຍນຳຄຸ້ມເຂດຂອງພວກເຂົາ. ພຣະອົງຈະບໍ່ປະພວກເຂົາໂດຍປາສຈາກການເປັນພະຍານ ແລະພະຍານນັ້ນກໍແມ່ນນຶ່ງໃນພວກເຂົານັ້ນເອງ.

ຈິ່ງເຂົ້າໃຈຢ່າງນີ້: ພຣະເຈົ້າຕ້ອງການໃຫ້ທ່ານແບ່ງປັນເຣື່ອງຄວາມເຊື່ອຂອງທ່ານກັບຄົນອື່ນໆ, ແລະພຣະອົງຕ້ອງການໃຫ້ທ່ານກະທຳດຽວນີ້. ທ່ານສາມາດບອກເຖິງການທີ່ທ່ານໄດ້ພົບກັບພຣະເຢຊູແລະໜູນໃຈຄົນອື່ນໆໃນການສົນທະນາຝ່າຍວິນຍານ. ພຣະອົງຢາກໃຊ້ທ່ານໃຫ້ເປັນມື, ເປັນຕີນ, ແລະເປັນປາກຂອງພຣະອົງໃນການປະກາດຂ່າວປະເສີດໃຫ້ແກ່ໂລກທີ່ເສັຽແລ້ວແລະແຕກສລາຍນີ້. ດຽວນີ້.

| ທ່ານຈະໃຊ້ເຣື່ອງການປ່ຽນແປງຂອງທ່ານໃນການແບ່ງປັນຂ່າວປະເສີດຢ່າງໃດ? |
|---|

ສິ່ງທີ່ສວຍງາມນັ້ນກໍຄືພຣະເຢຊູໄດ້ສັນຍາວ່າຈະຢູ່ກັບພວກເຮົາແລະໄດ້ໃຫ້ພຣະຄຳແກ່ພວກເຮົາເວົ້າເມື່ອເຮົາກ່າວເຣື່ອງພຣະອົງ. "ເມື່ອໃດກໍຕາມທີ່ພວກເຂົານຳທ່ານເຂົ້າໂຮງທັມມະເທສນາ ແລະພວກເຖົ້າແກ່ແລະອຳນາດການປົກຄອງ, ບໍ່ຕ້ອງຕົກໃຈກັງວົນກັບວ່າທ່ານຄວນຈະກ່າວປ້ອງກັນຕົວເອງຢ່າງໃດຫຼືຄວນຈະເວົ້າຫຍັງ ສຳລັບພຣະວິນຍານບໍຣິສຸດຈະສອນທ່ານໃນຂນະຊົ່ວໂມງນັ້ນວ່າຈະຕ້ອງເວົ້າຫຍັງ" (ລູກາ 12:11-12). ພຣະເຈົ້າຈະນຳພາຄຳເວົ້າແລະຄຳສົນທະນາຂອງທ່ານ. ແລະຖ້າທ່ານຖືກຖາມໃນສິ່ງທີ່ທ່ານບໍ່ສາມາດຕອບໄດ້, ຢ່າສູ່ຢ້ານທີ່ຈະຕອບວ່າທ່ານບໍ່ຮູ້ຈັກ!

ເມື່ອພຣະເຢຊູໄດ້ປິ່ນປົວຄວາມແຕກສລາຍຂອງທ່ານແລ້ວແລະເອີ້ນທ່ານຫາພຣະອົງເອງ, ພຣະອົງຍັງເອີ້ນທ່ານໃຫ້ເຂົ້າມີສ່ວນຮ່ວມໃນພາຣະກິດຂອງພຣະອົງ. ພຣະເຈົ້າຕ້ອງການທີ່ຈະໃຊ້ທ່ານໃຫ້ເຫັນຣິດອຳນາດການປິ່ນປົວແລະຄວາມສາມາດໃນການໄຖ່ຂອງພຣະອົງ. ດັ່ງນັ້ນຈິ່ງຊັກຊວນຄົນອື່ນໆໃຫ້ເຂົ້າມາໃນຊີວິດຂອງທ່ານ ແລະໃຫ້ເຂົາເຫັນວ່າ "ອົງພຣະຜູ້ເປັນເຈົ້າໄດ້ກະທຳການເພື່ອທ່ານຢ່າງຫຼວງຫຼາຍແລະພຣະອົງມີຄວາມເມດຕາຕໍ່ທ່ານຢ່າງໃດ."

| ກຸ່ມຂອງພວກເຮົາຈະສ່ອງສວ່າງໃສ່ຂົງເຂດຂອງຄວາມແຕກສລາຍໃນຄຸ້ມເຂດຂອງພວກເຮົາຢ່າງໃດ? |
|---|

## ນຳໃຊ້ໃນຊີວິດ

ອາທິດນີ້ທ່ານຈະແບ່ງປັນຊີວິດໃໝ່ໃນພຣະຄຣິດຂອງທ່ານຢ່າງໃດ? ສເນີໃຫ້ປະຕິບັດຕາມຄຳແນະນຳນີ້:

- **ບັນທຶກ.** ຂຽນຊື່ຂອງສາມຄົນໃນຊີວິດຂອງທ່ານທີ່ຍັງຢູ່ຫ່າງໄກຈາກພຣະເຈົ້າ. ອະທິຖານທຸກໆມື້ສຳລັບໂອກາດທີ່ຈະໄດ້ສົນທະນາເຣື່ອງຝ່າຍວິນຍານກັບແຕ່ລະຄົນ.
- **ຍ່າງ.** ຍ່າງຂ້າມທາງ, ໂດດຂ້າມຮົ້ວ, ຫຼືເຄາະຝາຂັ້ນເຂດຂອງໂຕະເຮັດວຽກທີ່ຕິດກັບຂອງທ່ານ. ເລີ້ມສົນທະນາເຣື່ອງຝ່າຍວິນຍານກັບຄົນໃດຄົນນຶ່ງທີ່ທ່ານພົບເຫັນເປັນປະຈຳ
- **ຄົ້ນຄວ້າ.** "ວິທະຍາສາດບໍ່ຮັບຮູ້ຄຣິສຕະສາສນາຈິງບໍ່?" "ທ່ານສາມາດເອົາຈິງເອົາຈັງກັບພຣະຄັມພີໄດ້ຢ່າງໃດ?" "ຖ້າຫາກວ່າພຣະເຈົ້າຂອງທ່ານເປັນພຣະເຈົ້າແຫ່ງຄວາມຮັກ, ເປັນຫຍັງທ່ານຈຶ່ງເຊື່ອໃນນະຮົກ?" ພວກເຮົາສາມາດໂຕ້ຕອບດ້ວຍພຣະຄຸນແລະສະຕິປັນຍາຕໍ່ຄຳຖາມຂອງພວກທີ່ຍັງສົງສັຍ.

ທ່ານບໍ່ຈຳເປັນຕ້ອງເດີນທາງໄກເພື່ອແບ່ງປັນຊີວິດໃໝ່ໃນພຣະຄຣິດຂອງທ່ານ ບ່ອນທຳອິດທີ່ພຣະເຈົ້າເອີ້ນທ່ານນັ້ນສ່ວນໃຫຍ່ບໍ່ແມ່ນໃຫ້ຂ້າມຟາກໂລກໄປ, ແຕ່ວ່າໃຫ້ຂ້າມທົ່ນທາງບ່ອນທ່ານຢູ່ນັ້ນ. ທ່ານຈະໄປບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**